# ກອງປະຊຸມປຶກສາຫາລືກ່ຽວກັບວຽກງານຕິດຕາມກະແສເງິນຕາໄຫຼເຂົ້າ ຈາກການສົ່ງອອກສິນຄ້າໄປຕ່າງປະເທດ ຂອງທຸລະກິດສົ່ງອອກ-ນຳເຂົ້າ ພາຍໃນແຂວງຫຼວງພະບາງ



ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ໄດ້ຈັດກອງປະຊຸມປຶກສາຫາລືກ່ຽວກັບວຽກງານຕິດຕາມກະແສເງິນຕາໄຫຼເຂົ້າ ຈາກການສົ່ງອອກສິນຄ້າໄປຕ່າງປະເທດ ຂອງທຸລະກິດສົ່ງອອກ-ນຳເຂົ້າ ພາຍໃນແຂວງຫຼວງພະບາງ ໃນຕອນເຊົ້າ ເວລາ 9:00 ໂມງ ວັນທີ 23 ມິຖຸນາ 2022 ຢູ່ຫ້ອງປະຊຸມຊັ້ນ I ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ໂດຍການເປັນປະທານຂອງ ທ່ານ ນາງ ພຸດດາວັນ ສີຣິສິມບັດ ຮອງຫົວໜ້າ ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ, ມີຄະນະຈາກທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ, ພະແນກແຜນການ ແລະ ການລົງທຶນແຂວງຫຼວງພະບາງ, ພະແນກອຸດສາຫະກຳ ແລະ ການຄ້າແຂວງຫຼວງພະບາງ, ພະແນກພະລັງງານ ແລະ ບໍ່ແຮ່ແຂວງຫຼວງພະບາງ, ສ່ວຍສາອາກອນປະຈຳແຂວງຫຼວງພະບາງ ແລະ ພາສີປະຈຳແຂວງຫຼວງພະບາງ ເຂົ້າຮ່ວມທັງໝົດ 12 ທ່ານ.

ຈຸດປະສົງຂອງກອງປະຊຸມແມ່ນເພື່ອປຶກສາຫາລືກ່ຽວກັບການຕິດຕາມ, ຂັ້ນຕອນ ແລະ ວິທີການຈັດຕັ້ງປະຕິບັດການເກັບກຳຂໍ້ມູນການໄຫຼເຂົ້າຂອງເງິນຕາ ຈາກການສົ່ງອອກສິນຄ້າໄປຕ່າງປະເທດ. ວິທີທາງໃນການກວດການການນຳເງິນສົດ ເຂົ້າ-ອອກ ພາຍໃນດ່ານຕ່າງໆຂອງແຂວງ ແລະ ຂັ້ນຕອນໃນການຕິດຕາມເງິນທຶນທີ່ນັກລົງທຶນຕ່າງປະເທດເຂົ້າມາລົງທຶນພາຍໃນແຂວງຫຼວງພະບາງ. ໃນກອງປະຊຸມໄດ້ມີການແລກປ່ຽນຫຼາຍບັນຫາຢ່າງກົງໄປກົງມາ ເຮັດໃຫ້ເປັນຂະບວນຟົດຟື້ນ ແລະ ສາມາດກຳນົດວິທີການແກ້ໄຂບາງບັນຫາກ່ຽວກັບວຽກງານດັ່ງກ່າວ.

**ຂຽນຂ່າວໂດຍ: ເຄນສະຫວັດ ສຸກສະຫວັນ**

**ພາບ: ກັນຈະນາ ໄຊຍະວົງ**

ຮັກບ້ານເກີດເມືອງນອນ ໃຊ້ຈ່າຍທອນເປັນເງິນກີບ